ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 3432/ກສຂ
ສາລະວັນ, ວັນທີ 13 ·10· 2026

ແຈ້ງການ

ເຖິງ: - ທ່ານ ຫົວໜ້າຂະແໜງລ້ຽງສັດ ແລະ ການປະມົງ.
- ທ່ານ ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ 8 ຕົວເມືອງ.

ເລື່ອງ: ໃຫ້ເອົາໃຈໃສ່ ຕິດຕາມ, ເຝົ້າລະວັງ ການລະບາດພະຍາດສັດຕາມລະດູການ.

- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ເລກທີ 08/ສພຊ, ລົງ ວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດ ວ່າດ້ວຍ ການກັກ ແລະ ຄວບຄຸມພະຍາດສັດ ສະບັບເລກທີ 228/ລບ, ລົງວັນທີ 31 ທັນວາ 2012;
- ອີງຕາມ ດຳລັດ ວ່າດ້ວຍ ການເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ສະບັບເລກທີ 644/ລບ, ລົງວັນທີ 25 ພະຈິກ 2024;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງສາລະວັນ ສະບັບເລກທີ 410/ຄປຂ.ສວ, ລົງວັນທີ 07 ເມສາ 2026.

ເພື່ອແຈ້ງເຕືອນໃຫ້ພໍ່ແມ່ປະຊາຊົນ ແລະ ຊາວກະສິກອນຜູ້ລ້ຽງສັດ ເພີ່ມທະວີຄວາມເຂັ້ມງວດໃນການຕິດຕາມ ແລະ ປ້ອງກັນສັດລ້ຽງຂອງຕົນ ເນື່ອງຈາກການປ່ຽນແປງຂອງສະພາບອາກາດ ເຊັ່ນ: ໄລຍະປ່ຽນຖ່າຍລະດູຝົນຫາລະດູແລ້ງ ຫຼື ໄລຍະອາກາດໜາວ ເຊິ່ງເຮັດໃຫ້ສັດມີພູມຄຸ້ມກັນຕ່ຳ ແລະ ຕິດເຊື້ອພະຍາດໄດ້ງ່າຍ ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ຈຶ່ງອອກແຈ້ງການ ດັ່ງນີ້:

1. ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ເປັນເຈົ້າການສົມທົບກັບ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ເອົາໃຈໃສ່ຕິດຕາມ, ເຝົ້າລະວັງ, ປ້ອງກັນ ແລະ ສະກັດກັ້ນການລະບາດ ຂອງພະຍາດສັດຕາມລະດູການ ຕາມຫຼັກວິຊາການ ແລະ ຕາມລະບຽບການ ຢ່າງເຂັ້ມງວດ.
2. ໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ເອົາໃຈໃສ່ ໂຄສະນາເຜີຍແຜ່ຂໍ້ມູນກ່ຽວກັບພະຍາດສັດທີ່ຕ້ອງເຝົ້າລະວັງຕາມລະດູການ ແລະ ວິທີການປ້ອງກັນ ໃຫ້ພໍ່ແມ່ປະຊາຊົນ ແລະ ຊາວກະສິກອນຜູ້ລ້ຽງສັດ ຮັບຮູ້ ແລະ ຮັບຊາບຢ່າງທົ່ວເຖິງ.
3. ແນະນຳພໍ່ແມ່ປະຊາຊົນ ແລະ ຊາວກະສິກອນຜູ້ລ້ຽງສັດ ປະຕິບັດມາດຕະການປ້ອງກັນເຊັ່ນ: ຕ້ອງສັກວັກຊີນປ້ອງກັນພະຍາດສັດຕາມກຳນົດເວລາ ແລະ ຖືກຕ້ອງຕາມຮອບວຽນ, ໝັ່ນອະນາໄມ ແລະ ສີດຢາຂ້າເຊື້ອຄອກສັດເປັນ

ປະຈຳ, ຈັດການລະບົບຖ່າຍເທອາກາດ ແລະ ຮັກສາຄວາມອົບອຸ່ນໃຫ້ສັດໃນຊ່ວງອາກາດໜາວ, ງົດການນຳເຂົ້າສັດໃໝ່ມາລ້ຽງຮ່ວມ ໂດຍບໍ່ໄດ້ຜ່ານການກວດກາ ຫຼື ກັກກັນຢ່າງໜ້ອຍ 14-21 ມື້, ສັງເກດອາການຜິດປົກກະຕິຂອງສັດທຸກໆມື້ ເຊັ່ນ: ເບື່ออาหาร, ມີໄຂ້ສູງ, ເຫງົາ, ຫຼື ມີບາດແຜຕາມຕົນໂຕ.

4. ເມື່ອພົບສັດມີອາການປ່ວຍ ຫຼື ຕາຍຜິດປົກກະຕິ ຫ້າມ ຊື້-ຂາຍ, ເຄື່ອນຍ້າຍ, ຂ້າ, ຄ້ວ ຫຼື ກິນສັດທີ່ປ່ວຍຕາຍເດັດຂາດ ເພາະອາດເຮັດໃຫ້ເຊື້ອພະຍາດແຜ່ລະບາດເປັນວົງກ້ວາງ ຫຼື ຕິດຕໍ່ສູ່ຄົນໄດ້. ໃຫ້ຟ້າວລາຍງານຕໍ່ ສັດຕະວະແພດບ້ານ, ອຳນາດການປົກຄອງບ້ານ, ຕາແສງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ທັນທີ ເພື່ອເຂົ້າຮ່ວມຊ່ວຍເຫຼືອ ແລະ ເກັບຕົວຢ່າງໄປກວດວິເຄາະ, ກໍລະນີສັດຕາຍ ຕ້ອງຝັງ ຫຼື ເຜົາຕາມຫຼັກວິຊາການ ຢ່າງເຂັ້ມງວດ.
5. ເມື່ອຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ໄດ້ຮັບແຈ້ງການສະບັບນີ້ແລ້ວ ໃຫ້ຮີບຮ້ອນຈັດຕັ້ງຜັນຂະຫຍາຍໃຫ້ພໍ່ແມ່ປະຊາຊົນ ແລະ ຊາວກະສິກອນຜູ້ລ້ຽງສັດ ພາຍໃນເມືອງຂອງຕົນ ຮັບຮູ້ຢ່າງທົ່ວເຖິງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຫົວໜ້າພະແນກ

ປອນບຳສິ່ງ:

- ຄະນະນຳພະແນກທ່ານລະ 1 ສະບັບ;
- ຂະແໜງລ້ຽງສັດ ແລະ ການປະມົງ 1 ສະບັບ;
- ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງລະ 1 ສະບັບ;
- ເກັບມ້ຽນ 1 ສະບັບ.

ພະແນກ ກະສິກຳ ແລະ ສິ່ງແວດລ້ອມ ແຂວງສາລະວັນ

ສີວັນພະກອນ ວົງບຸນທັນ